**ບົດຖະແຫຼງຂ່າວ**
**ຂອງ ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ**
**ໃນພິທີຖະແຫຼງຂ່າວ ຜົນສຳເລັດກອງປະຊຸມໂຕະມົນ ປະຈຳປີ 2024**
*ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ*
*ວັນທີ 14 ພະຈິກ 2024*

**ຂໍສະແດງຄວາມນັບຖື ແລະ ຮັກແພງມາຍັງ ບັນດາທ່ານ ຜູ້ຕາງໜ້າຈາກສຳນັກຂ່າວ ແລະ ສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາຮ່ວມໃນງານຖະແຫຼງຂ່າວ ໃນມື້ນີ້.**

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະ ປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ຮ່ວມກັບ **ທ່ານ ບັກໂຮ ເດັຍ ເບີຄະນ່ອຟ, ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ** ຕ້ອນຮັບ ບັນດາທ່ານຜູ້ຕາງໜ້າ ສື່ມວນຊົນ ແລະບັນດາທ່ານແຂກທີ່ມີກຽດ ເຂົ້າສູ່ພິທີຖະແຫຼງຂ່າວ ຜົນສຳເລັດຂອງກອງປະຊຸມໂຕະມົນ ປະຈຳປີ 2024, ເຊິ່ງໄດ້ກຳນົດຂຶ້ນພາຍໃຕ້ຫົວຂໍ້: ***"ເພີ່ມທະວີການເປັນຄູ່ຮ່ວມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຂອງ ສປປ ລາວ"***

ກອງປະຊຸມໂຕະມົນປະຈຳປີ 2024 ໃນຄັ້ງນີ້ ໄດ້ດຳເນີນມາເປັນເວລາ 1 ວັນເຕັມ ດ້ວຍຜົນສຳເລັດຢ່າງຈົບງາມ ແລະ ຂ້າພະເຈົ້າ ຂໍຖືໂອກາດນີ້ ຕາງໜ້າໃຫ້ຄະນະປະທານກອງ ປະຊຸມ ຂໍຕີລາຄາສູງຕໍ່ຜົນສຳເລັດ ຂອງກອງປະຊຸມໂຕະມົນ ປະຈຳປີ 2024 ໂດຍໄດ້ຜ່ານ ຂະບວນການຕ່າງໆ ຕາມກົນໄກຂອງຂະບວນການໂຕະມົນ, ໜ່ວຍງານຂະແໜງການ (Sector Working Group - SWG) ແລະ ກອງປະຊຸມວິຊາການຂັ້ນຕ່າງໆ ເຊິ່ງໄດ້ລົງ ເລິກໃນບັນຫາຕ່າງໆທີ່ຈຳເປັນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ສຳລັບປີ 2024 ແລະທິດທາງແຜນການປີ 2025 ກໍ່ຄື ການຈັດ ຕັ້ງປະຕິບັດຍຸດທະສາດການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2026 ແລະວາລະການພັດທະນາ ຮອດປີ 2030.

ສະນັ້ນ, ກອງປະຊຸມ ໂຕະມົນ ປະຈຳປີ 2024 ໄດ້ເອກະພາບກັນ ດັ່ງນີ້:

- ພວກເຮົາຈະໄດ້ພ້ອມກັນ ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ສໍາລັບປີ 2025 ຕິດພັນກັບ ສອງວາລະແຫ່ງຊາດ ໃຫ້ສໍາເລັດຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງ ແລະ ຮຽກຮ້ອງໃຫ້ທຸກພາກສ່ວນເພີ່ມຄວາມເອົາໃຈໃສ່ໃນການຊຸກຍູ້ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ສໍາລັບປີ 2025 ພ້ອມທັງໃຫ້ຄວາມໝາຍໝັ້ນເພື່ອສະໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X;
- ສືບຕໍ່ເຊື່ອມສານບັນດາເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ສູ້ຊົນ ເພື່ອບັນລຸເປົ້າໝາຍພັດທະນາແບບຍືນຍົງ ແລະການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2026 ດ້ວຍການສຸມທຶນຮອນທີ່ມີ ເພື່ອສຸມໃສ່ການພັດທະນາຊັບພະຍາກອນມະນຸດທີ່ຮັບປະກັນຄຸນນະພາບ, ເພີ່ມທະວີການຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍຢ່າງເຂັ້ມງວດ, ພະຍາຍາມທຸກຄວາມສາມາດ ເພື່ອຫຼຸດຜ່ອນຄວາມແຕກໂຕນ ຂອງການພັດທະນາ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ, ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ແລະ ເພື່ອແກ້ໄຂຄວາມທຸກຍາກ ແລະສ້າງຂີດຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດພາຍໃນ ດ້ວຍການສ້າງສະພາບແວດລ້ອມການດໍາເນີນທຸລະກິດທີ່ເອື້ອອໍານວຍໃຫ້ດີຂຶ້ນ;
- ຍົກລະດັບການກະກຽມຄວາມພ້ອມດ້ານຕ່າງໆ ໃນການຮັບມືກັບໄພພິບັດທາງທໍາມະຊາດ, ພາຍໃຕ້ການຍົກລະດັບການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ, ການປັບປຸງລະບົບການເຕືອນໄພລ່ວງໜ້າ, ການແລກປ່ຽນຂໍ້ມູນ-ຂ່າວສານການເຕືອນໄພ ແລະຮັບມືຮ່ວມກັນ

ລະຫວ່າງປະເທດເພື່ອນມິດທີ່ມີຊາຍແດນຕິດຈອດກັນ, ການສຶກສາຄວາມສ່ຽງ ແລະ ການສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ເອົາໃຈໃສ່ໃຫ້ຄວາມຊ່ວຍເຫຼືອແກ່ ຊຸມຊົນທີ່ມີຄວາມສ່ຽງສູງ;

- ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດຜົນການທົບທວນແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ;
- ສືບຕໍ່ເອົາໃຈໃສ່ ພ້ອມກະກຽມຄວາມພ້ອມໃນການຈັດກອງປະຊຸມໂຕະມົນ ລະດັບສູງ ໃນປີ 2025 ທີ່ຈະມາເຖິງນີ້ ໃຫ້ເປັນເວທີລະດັບສູງໃນການປຶກສາຫາລື ແລະ ໃຫ້ການຢັ້ງຢືນຮັບຮອງຈາກບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ບັນດາອົງການຈັດຕັ້ງສາກົນ ແລະທົ່ວສັງຄົມ ໃນການສະໜັບສະໜູນທຶນຮອນ ທາງດ້ານການເງິນ ແລະວິຊາການ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະບັນລຸເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ.

ສັງລວມແລ້ວ ໃນປີ 2025 ພວກເຮົາຈະມີແຜນວຽກຫລາຍຢ່າງ ທີ່ຈະສືບຕໍ່ຈັດຕັ້ງປະຕິບັດ, ໃນນີ້ ການກະກຽມຄວາມພ້ອມໃນການຈັດກອງປະຊຸມໂຕະມົນ ລະດັບສູງ ໃນປີ 2025 ແລະ ກອງປະຊຸມປິ່ນອ້ອມ ວຽກງານຕ່າງໆທີ່ເປັນພັນທະຕໍ່ເພື່ອນມິດສາກົນໃນລະດັບ ສອງຝ່າຍ ແລະ ຫຼາຍຝ່າຍ ເຊິ່ງໜ້າວຽກດັ່ງກ່າວນັ້ນບໍ່ສາມາດຈັດຕັ້ງປະຕິບັດໄດ້ໂດຍ ສປປ ລາວ ເອງຝ່າຍດຽວເທົ່ານັ້ນ ແຕ່ຕ້ອງໄດ້ມີການເຂົ້າຮ່ວມຢ່າງເອົາຈິງເອົາຈັງຂອງທຸກພາກສ່ວນ, ໂດຍສະເພາະ ການເຂົ້າຮ່ວມຢ່າງສະເໝີຕົ້ນສະເໝີປາຍ ຂອງປະເທດເພື່ອນມິດສາກົນ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ກໍຄື ທົ່ວສັງຄົມ.

ຜົນສຳເລັດຂອງກອງປະຊຸມໂຕະມົນ 2024 ໃນຄັ້ງນີ້, ກະຊວງແຜນການ ແລະ ການລົງທຶນ ໃນນາມຜູ້ປະຈຳການຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ຈະສົມທົບກັບພາກສ່ວນກ່ຽວຂ້ອງສັງລວມ ແລະລາຍງານ ລັດຖະບານ ເພື່ອມີທິດຊີ້ນຳ ແລະເປັນບ່ອນ

ອີງໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດຕາມພາລະບົດບາດ ແລະສິດໜ້າທີ່ຂອງຕົນ. ສະນັ້ນ ຂ້າພະເຈົ້າ ຂໍຖືໂອກາດນີ້ ຮຽກຮ້ອງໃຫ້ບັນດາກະຊວງ, ອົງການກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະອົງການປົກຄອງທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະອົງການ ຈັດຕັ້ງທາງສັງຄົມ ສືບຕໍ່ຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການ ພ້ອມທັງເພີ່ມທະວີການປະສານສົມທົບເຊິ່ງກັນ ແລະກັນ ຢ່າງກົມກຽວ ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດຕົວຈິງໃຫ້ມີປະສິດທິຜົນ, ທັງນີ້ ກໍ່ເພື່ອສືບຕໍ່ປະກອບສ່ວນຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2025 ຕິດພັນກັບສອງວາລະແຫ່ງຊາດ, ວາລະການພັດທະນາ 2030 ແລະພັນທະສາກົນຕ່າງໆທີ່ ສປປ ລາວ ເປັນພາຄີ ໃຫ້ບັນລຸຕາມຄາດໝາຍທີ່ໄດ້ວາງໄວ້.

ຂ້າພະເຈົ້າ ຕາງໜ້າໃຫ້ລັດຖະບານ ສປປ ລາວ ກໍຄື ກະຊວງແຜນການ ແລະ ການລົງທຶນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະພາກເອກະຊົນ ທີ່ໄດ້ໃຫ້ການສະໜັບສະໜູນ ທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນແຕ່ລະໄລຍະ.

ພ້ອມດຽວກັນນີ້, ຂ້າພະເຈົ້າ ຂໍຖືໂອກາດນີ້ ແຈ້ງໃຫ້ບັນດາທ່ານຊາບວ່າ ກອງປະຊຸມໂຕະມົນ ລະດັບສູງໃນປີ 2025 ທີ່ຈະມາເຖິງນີ້ ຈະໄດ້ສົນທະນາ ແລະປຶກສາຫາລື ກ່ຽວກັບຜົນການທົບທວນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ນຳສະເໜີຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030). ໃນປີ 2025 ທີ່ຈະມາເຖິງນີ້ ລັດຖະບານ ສປປ ລາວ ຈະເຊື້ອເຊີນຜູ້ແທນກອງປະຊຸມເຂົ້າຮ່ວມ ຫຼາຍກວ່າ 500 ທ່ານ ເຊິ່ງໃນນັ້ນ ປະກອບມີ ກະຊວງຂະແໜງການ, ອົງການທຽບເທົ່າກະຊວງ ລວມທັງໝົດ 17 ແຂວງ ແລະ 01 ນະຄອນຫຼວງ, ບັນດາການນຳຂັ້ນສູງຂອງປະເທດເພື່ອນມິດສາກົນ, ການ

ນຳຂັ້ນສູງຂອງຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ອົງການບໍ່ຫວັງຜົນກຳໄລ ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ.

ທ້າຍສຸດນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງສື່ມວນຊົນ ແລະບັນດາທ່ານທີ່ເຂົ້າຮ່ວມ ພິທີ ແລະບັນດາທ່ານ ທີ່ຮັບຊົມທາງໂທລະພາບ, ໜັງສືພິມ ແລະ ຜ່ານຊ່ອງທາງສື່ສານອື່ນໆ ທີ່ໄດ້ໃຫ້ຄວາມສົນໃຈ ແລະຕິດຕາມການເຄື່ອນໄຫວຂອງວຽກງານຂະບວນການໂຕະມົນ ຕະຫຼອດມາ ອັນເປັນການປະກອບສ່ວນອັນໃຫຍ່ຫຼວງ ແລະສຳຄັນ ຕໍ່ວຽກງານການພັດທະນາຂອງ ສປປ ລາວ ໃຫ້ປະສົບຜົນສຳເລັດຕາມທີ່ໄດ້ກຳນົດໄວ້.

ຂໍຂອບໃຈ